ພິທີມອບ-ຮັບໃບຢັ້ງຢືນການນໍາເຂົ້າ ແລະ ຢັ້ງຢືນທາງດ້ານເຕັກນິກມາດຕະຖານການນໍາໃຊ້ຊິງຊັງຂະໜາດ
Written by Administrator
Thursday, 04 April 2019 01:17 - Last Updated Thursday, 04 April 2019 02:09
 ຕອນບາຍ ຂອງວັນທີ 3 ເມສາ 2019 ນີ້ ຢູ່ທີ່ຫ້ອງປະຊຸມ ຂອງພະແນກ ວິທະຍາສາດ ແລະ
ເຕັກໂນໂລຊີ ແຂວງ ບໍ່ແກ້ວ ໄດ້ຈັດພິທີ ມອບ-ຮັບ ໃບຢັ້ງຢືນການນໍາເຂົ້າ ແລະ
ຢັ້ງຢືນເຕັກນິກມາດຕະຖານຂອງຊິງຊັງຂະໜາດໃຫຍ່ 100 ໂຕນ ຂຶ້ນໄປ
ລະບົບການເຮັດວຽກຂອງຊິງຊັງແມ່ນ ລະບົບດີຈີີຕອນ, ເລກເຄື່ອງ: 86-916-2386271, 2388352
ລຸ້ນ Z86001147, ຍີ້ຫໍ້ DHM9Bd10-30t-12T2t30, ລະຫັດເຄື່ອງ 86-916-2576271, 6-15 VDC,
ເຊິ່ງສະແດງຜົນດ້ວຍເອເລັກໂຕຣນິກ (ຈໍຄອມພີວເຕີ) ZHONGLISCALE 13888715101
ຂອງບໍລິສັດ ວິໄລທອງ ທີ່ຕັ້ງຢູ່ ບ້ານສີເມືອງງາມ ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ.
ຊິງຊັງດັ່ງກ່າວ ແມ່ນໃຊ້ສໍາລັບ ຊັງລົດບັນທຸກຂະໜາດໃຫຍ່ ທີ່ລໍາລຽງສີນຄ້າ ຂາອອກ
ໄປສູ່ຕ່າງແຂວງ ແລະ ສປປ ຈີນ. ທ່ານ ບຸນເພັງ ວິໄລຫົງ ເຈົ້າຂອງບໍລິສັດ ວິໄລທອງ
ຂາອອກ-ຂາເຂົ້າ ໄດ້ໃຫ້ພະນັກງານ ເຮົາຮູ້ວ່າ
ການນໍາເຂົ້າຊິງຊັ່ງຂະໜາດໃຫຍ່ມາຕິດຕັ້ງກໍ່ເພື່ອອໍານວຍຄວາມສະດວກໃຫ້ແກ່ທຸລະກິດການຄ
້າພາຍໃນ ເຂົ້າລວມ ເວົ້າສະເພາະ ແມ່ນທຸລະກິດການຂົນສົ່ງປະເພດຕ່າງໆ
ເພື່ອເປັນການແກ້ໄຂບັນຫາຕົ້ນທາງ ໃນການສົ່ງອອກສິນຄ້າທີ່ມີຄວາມບັນຈຸໜັກ
ເພື່ອຫຼີ້ກລ່ຽງ ການບັນທຸກນໍ້າໜັກເກີນ ທີ່ທາງລະບຽບກົດໝາຍ
ຂອງການຂົນສົ່ງໄດ້ກໍານົດໄວ້, ສະນັ້ນຍິງເປັນການດີ ທີ່ຂະແໜງ ມາດຕະຖານ ວັດແທກ ພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງຂອງພວກເຮົາ ໄດ້ຖືເປັນສໍາຄັນໃນການ ຕິດຕາມ, ກວດກາ,
ກວດສອບ-ສອບທຽບ ລະບົບການເຮັດວຽກຂອງຊິ່ງຊັ່ງດັ່ງກ່າວ. ຜ
່ານການຕິດຕາມ ກວດກາ, ກວດສອບ-ສອບທຽບ ຂອງຂະແໜງ ມາດຕະຖານ ແລະ ວັດແທກ ເຫັນວ່າ
ຊິ່ງຊັງນໍາເຂົ້າມາຖືກຕ້ອງຕາມຂັ້ນຕອນ ແລະ ມີໝາຍເລກລະບົບຢ່າງຄົບສຸດ ແລະ
ມາດຕະຖານດ້ານນໍ້າໜັກແມ່ນມີຄວາມໃກ້ຄຽງຫຼາຍທີ່ສຸດ ທີ່ມາດຕະຖານແຫ່ງຊາດໄດ້ກໍານົດໄວ້.
ຜ່ານການກວດກາຕົວຈີງເຫັນວ່າຖືກຕ້ອງຕາມເຕັກນິກ, ພະແນກ ວິທະຍາສາດ ແລະ
ເຕັກໂນໂລຊີແຂວງຈື່ງໄດ້ອອກໃບຢັ້ງຢືນການນໍາເຂົ້າ ແລະ
ຢັ້ງຢືນມາດຕະຖານນໍ້າໜັກໃຫ້ບໍລິສັດດັ່ງກ່າວ.
ໃຫ້ກຽດມອບໂດຍທ່ານ ຄອນໄຊ ສະຕິ ຫົວໜ້າ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ ບໍ່ແກ້ວ
ຮັບໂດຍທ່ານ ບຸນເພັງ ວິໄລຫົງ ເຈົ້າຂອງບໍລິສັດ ວິໄລທອງ ຂາອອກ-ຂາເຂົ້າ, ມີຄະນະພະແນກ,
ພ້ອມດ້ວຍວິຊາການ ເຂົ້າຮ່ວມ.
ຂ່າວ ແລະ ພາບໂດຍ: ປະກາສິດ ທໍາມະວົງ
 1 / 1